# ແຂ່ງຂັນແຕ່ງ
# ເພງ ໂອບັກເຄຍ








""ຮ່ວມແຂ່ງຂັນແຕ່ງເພງ "ໂອບັກເຄຍ" ກັບ ອົງການຊ່ວຍເຫຼືອເດັກ ສາກົນ ປະຈຳ ສປປ ລາວ ແລະ ໂຄງການ WMP""

**ອ່ານລາຍລະອຽດເພີ້ມ ເຕີມໄດ້ດ້ານລຸ່ມ**

ມີນາ, 2023

**19**

ສາມາດຜົນງານຂອງທ່ານມາທີ່:

vientiane@wmprojects.org

ຫຼື f WMPLaos ຫລື Save the Children

**ພາຍໃນວັນທີ 19 ມີນາ 2023!**

# Wolbachia song contest

## The songwriting competition for everyone.

ຂໍເຊີນຊວນທຸກໆທ່ານທີ່ມີຄວາມເຊື່ອໝັ້ນໃນພະລັງແຫ່ງສຽງເພງ ແລະ ມີໃຈຮັກໃນການແຕ່ງເພງ ມາຮ່ວມສ້າງສັນຜົນງານເພງພ້ອມທຳນອງ ຕາມຄວາມຖະນັດຂອງທ່ານ ເພື່ອສົ່ງເຂົ້າຮ່ວມປະກວດກັບອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ ແລະ ໂຄງການຄວບຄຸມປະຊາກອນຍຸງໂລກ ພາຍໃຕ້ຫົວຂໍ້ "ສະບາຍດີໂວບັກເຄຍ - ຢຸດໄຂ້ຍຸງລາຍ ໂດຍການແຜ່ຍຸງລາຍທີ່ມີໂວບັກເຄຍ"ເພື່ອຊີງລາງວັນລວມມູນຄ່າຫລາຍກວ່າ 20 ລ້ານກີບ ໂດຍບົດເພງທີ່ໄດ້ຮັບລາງຈະຖືກນຳໄປໃຊ້ປະກອບກັບສື່ຕ່າງໆ ຂອງ ໂຄງການຄວບຄຸມໄຂ້ຍຸງລາຍໂດຍນຳໃຊ້ວິທີການໂວບັກເຄຍ.

ທ່ານສາມາດສົ່ງຜົນງານໄດ້ຕັ້ງແຕ່ ມື້ນີ້ ຈົນຮອດ ວັນທີ **19** ມີນາ **2023**

## *ເງື່ອນໄຂການສົ່ງຜົນງານເຂົ້າປະກວດ*

1. ເປັນບຸກຄົນ ຫຼື ກຸ່ມກໍ່ໄດ້.
2. ອາຍຸ 18 ຫາ 70 ປີ.
3. ແຕ່ງເພງພ້ອມທຳນອງ ແລະ **ບັນທຶກ Demo ເປັນວິດີໂອ ຫຼື ບັນທຶກເປັນສຽງກໍ່ໄດ້.**
4. ສາມາດແຕ່ງທຳນອງໄດ້ຕາມໃຈ
5. ເນື້ອເພງຕ້ອງເປັນພາສາລາວເປັນຫຼັກ ແລະ ຕ້ອງປະກອບມີ Keywords (**ສາມາດເບິ່ງໄດ້ທີ່ໜ້າສຸດທ້າຍ**) ຫລື ນຳໃຊ້ເນື້ອເພງທີ່ທາງເຮົາມີໃຫ້ໄວ້ແລ້ວ (**ສາມາດເບິ່ງໄດ້ທີ່ໜ້າສຸດທ້າຍ**) ເຊິ່ງສາມາດດັດແກ້ ແລະ ປ່ຽນເນື້ອເພງໄດ້ຕາມຄວາມເໝາະສົມ ແຕ່ຕ້ອງໃຫ້ປະກອບມີ key words ຕາມທີ່ເຮົາກຳນົດໄວ້.
6. ຄວາມຍາວຂອງເພງຕ້ອງບໍ່ເກີນ 2.5 ນາທີ.

## *ຂອງລາງວັນສຳຫຼັບຜູ້ທີ່ຊະນະເລີດ*

1.ຈະໄດ້ຮັບໂອກາດຮ່ວມເຮັດວຽກກັບນັກເຮັດເພງມືອາຊີບ ເພື່ອມາຊ່ວຍເຮັດເພງຂອງທ່ານໃຫ້ສົມບູນຂຶ້ນ.
2.ເພງຂອງທ່ານຈະໄດ້ສ້າງເປັນ ມິວຊິກວີດີໂອ.
3.ໄດ້ຮັບລາງວັນເງິນສົດ ຈຳນວນ 5,000,000 ກີບ.
4.ຮ່ວມສະແດງ ຫລື ໃຊ້ເພງຂອງທ່ານໃນພິທີປ່ອຍຍຸງ ໂວບັກເຄຍ ຢ່າງເປັນທາງການ ໃນທ້າຍເດືອນ ເມສາ/2023.

# Wolbachia song contest

The songwriting competition for everyone.



## *ເກນຂອງການໃຫ້ຄະແນນຜົນງານ*

1.ເນື້ອຫາ ແລະ ຄວາມໝາຍຂອງເພງ
2.ຄວາມຄິດສ້າງສັນ
3.ຟັງແລ້ວຕິດຫູ/ຈື່ງ່າຍ



## ໄລຍະຂອງການຂອງກິດຈະກຳຮ່ວມແຕ່ງເພງ ສະບາຍດີໂອບັກເຄຍ

**ເປີດຮັບຜົນງານ**
**3 - 19 ມີນາ 2023**

ຄັດເລືອກເອົາຜົນງານ Top 5
**20 - 26 ມີນາ 2023**

ເປີດໃຫ້ໂວດຜ່ານທາງເຟດບຸກ WMPLaos ເພື່ອເລືອກເອົາຜົນງານທີ່ດີທີ່ສຸດ
**27 - 31 ມີນາ 2023**

**ປະກາດຜົນງານທີ່ຊະນະເລີດ**
**3 ເມສາ 2023**

**ສົ່ງວິດີໂອ ຫຼື ສຽງບັນທຶກ ພ້ອມເນື້ອເພງໂອບັກເຄຍຂອງທ່ານໄດ້ທີ່:**

vientiane@wmprojects.org

**ຫຼື Inbox ຫາ Facebook page ຂອງພວກເຮົາ ທີ່:**

**WMPLaos ຫຼື Save the Children in Laos**

**ຢ່າລືມແນບຂໍ້ມູນຕິດຕໍ່ຂອງທ່ານ!**

Save the Children

World Mosquito Program

# Wolbachia song contest

The songwriting competition for everyone.

## ທາງເລືອກທີ 1

### ເນື້ອເພງທີ່ແຕ່ງໃໝ່ຕ້ອງປະກອບມີຂໍ້ຄວາມສຳຄັນ (Key messages) ດັ່ງນີ້:

- ໂວບັກເຄຍ ແມ່ນເຊື້ອຈຸລິນຊີດີ
- ໂວບັກເຄຍ ສາມາດຢັບຢັ້ງການສົ່ງຕໍ່ເຊື້ອໄຂ້ຍຸງລາຍ
- ວິທີການ ໂວບັກເຄຍ ປອດໄພຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ
- ມັນເປັນວິທີການ ໄດ້ຮັບຜົນຍືນຍົງໃນໄລຍະຍາວ

## ທາງເລືອກທີ 2

### ນຳໃຊ້ ຫຼື ດັດແກ້ ເນື້ອເພງຂ້າງລຸ່ມ

**ຖ້າດັດແກ້ ແມ່ນໃຫ້ຮັກສາ ເນື້ອໃນນຳຄັນທີ່ກ່າວໄວ້ໃນທາງເລືອກທີ 1**

ສະບາຍດີ...ສະບາຍດີ...
ນີ້ຄື ນະວັດຕະກຳໃໝ່.
ຊື່..ໂວບັກເຄຍ ນີ້...
ຈະມາຮ່ວມໃຈ...
ໂອ..ເພື່ອນສະຫາຍເອີຍ...
ຊ່ວຍກັນກຳຈັດເຊື້ອພະຍາດຮ້າຍ
ບໍ່ໃຫ້ເຫຼືອຢູ່ດິນ...
ຂໍໃຫ້ຊາວປະຊາ..
ອັນ..ໂວບັກເຄຍ ນີ້ມາ
ມັນຊ່ວຍປ້ອງກັນ ຫຼາຍຊີວິດ
ທ່ານຈະໄດ້ຢູ່ສຸກສະບາຍ
ໃຫ້ທຸກຄົນອຸ່ນໃຈ...

ແວວຄຳ...ໂວບັກເຄຍ...
ຜ່ານການ ວິໄຈ ມາຫຼາຍ ປີ
ແມ່ນເຊື້ອຈຸລິນຊີດີ ຂອງໃໝ່
ສາມັກຄີ ປາບເຊື້ອຍຸງລາຍ...
ຢ່າໄດ້ນອນນິ້ງເສີຍ..ຮີບມາຊ່ວຍກັນໄວໆ
ໃຫ້ຫາຍກ້ຽງໝົດສິ້ນ
ໃຕ້ຟ້າເມືອງລາວ
ລາວ..ຢູ່ເຢັນສຸກສັນ
ບໍ່ເປັນອັນຕະລາຍ..ດັ່ງທ່ານຄິດ
ບໍ່ໃຫ້ຕິດ..ເຊື້ອໄຂ້ຍຸງລາຍ
ຫາຍຄວາມກັງວົນ
ຍ້ອນມີຍຸງລາຍ  ໂວບັກເຄຍ... (ຊ້ຳ)